ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສະພາແຫ່ງຊາດ ເລກທີ 05/94/ສພຊ

ວຽງຈັນ, ວັນທີ18 ກໍລະກົດ 1994

# ກົດໝາຍ
# ວ່າດ້ວຍງົບປະມານແຫ່ງລັດ

## ພາກທີ I
## ບົດບັນຍັດທົ່ວໄປ

### ໝວດທີ 1
### ຫລັກການພື້ນຖານຂອງງົບປະມານແຫ່ງລັດ

**ມາດຕາ 1.** ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ກຳນົດຫລັກການພື້ນຖານຂອງງົບປະມານແຫ່ງລັດ ກ່ຽວກັບການສ້າງ, ການພິຈາລະນາຮັບຮອງ, ການຈັດຕັ້ງປະຕິບັດງົບປະມານ ແລະ ການຕິດຕາມກວດກາ ແນໃສ່ປະຕິບັດນະໂຍບາຍແຜນພັດທະນາເສດຖະກິດ-ສັງຄົມ, ຂຸດຄົ້ນແຫລ່ງລາຍຮັບ, ຮັບປະກັນຄວາມດຸ່ນດ່ຽງເສດຖະກິດມະຫາພາກ, ປັບປຸງຄວາມເປັນລະບຽບຮຽບ ຮ້ອຍໃນການປະຕິບັດງົບປະມານແຫ່ງລັດ ແລະ ປະກອບສ່ວນເຂົ້າໃນການ ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ.

**ມາດຕາ 2.** ງົບປະມານແຫ່ງລັດ ແມ່ນແຜນຄາດຄະເນລາຍຮັບ ແລະ ລາຍຈ່າຍປະຈຳປີຂອງລັດ. ງົບປະມານແຫ່ງລັດ ແມ່ນໃຈກາງຂອງລະບົບການເງິນແຫ່ງຊາດ, ເປັນເຄື່ອງມືຂອງລັດເພື່ອດັດສົມເສດຖະກິດແຫ່ງຊາດ.

**ມາດຕາ 3.** ບັນດາແຫລ່ງລາຍຮັບ-ລາຍຈ່າຍທັງໝົດຂອງລັດ ຕ້ອງໄດ້ຈົດເຂົ້າໃນແຜນງົບປະມານແຫ່ງລັດອັນດຽວທີ່ເອກະພາບ.

ການເກັບລາຍຮັບເຂົ້າງົບປະມານ ກໍຄືການອະນຸມັດລາຍຈ່າຍງົບປະມານຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 4.** ແຕ່ລະປີຕ້ອງສ້າງແຜນງົບປະມານແຫ່ງລັດ. ໃນການສ້າງແຜນງົບປະມານແຫ່ງລັດ ນັ້ນຕ້ອງຮັບປະກັນຫລັກການລວມສູນປະຊາທິປະໄຕ ທັງເລີ່ມຈາກຄວາມອາດສາມາດຕົວຈິງຂອງເສດຖະກິດແຫ່ງຊາດ ທັງຮັບປະກັນການດຸ່ນດ່ຽງເສດຖະກິດມະຫາພາກ ແລະ ຕິດແທດກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 5.** ສະພາແຫ່ງຊາດ ພິຈາລະນາ ແລະ ຮັບຮອງເອົາແຜນງົບປະມານແຫ່ງລັດພ້ອມທັງແຜນພັດທະນາເສດຖະກິດ-ສັງຄົມປະຈຳປີ.

ສົກປີງົບປະມານແຫ່ງລັດເລີ່ມແຕ່ວັນທີ່ 1 ຕຸລາ ຂອງປີ ແລະ ສິ້ນສຸດລົງໃນວັນທີ່ 30 ກັນຍາຂອງປີຕໍ່ມາ. ງົບປະມານປະຈຳປີ ແມ່ນງົບປະມານທີ່ຖືກຮັບຮອງເອົາຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນກົດຫມາຍສະບັບນີ້. ຖ້າມີຄວາມຈຳເປັນກໍສາມາດດັດແກ້ງົບປະມານໄດ້. ພາຍຫລັງໄດ້ມີການດັດແກ້ງົບປະມານແລ້ວ, ງົບປະມານດັດແກ້ ກໍຈະປ່ຽນແທນງົບປະມານປະຈຳປີ. ສະພາແຫ່ງຊາດເປັນຜູ້ພິຈາລະນາ ແລະ ຮັບຮອງເອົາງົບປະມານດັດແກ້ດ້ວຍເງື່ອນໄຂດຽວກັນກັບການຮັບຮອງເອົາງົບປະມານປະຈຳປີ.

**ມາດຕາ 6.** ລາຍຮັບທັງຫມົດ ຕ້ອງມອບເຂົ້າງົບປະມານ; ບໍ່ອະນຸຍາດໃຫ້ອົງການຂອງລັດ, ບໍ່ວ່າຂະແຫນງການໃດ, ຂັ້ນໃດ ຫລື ບຸກຄົນໃດນຳເອົາລາຍຮັບໄປຈ່າຍໂດຍກົງ ໂດຍບໍ່ຖອກເຂົ້າງົບປະມານແຫ່ງລັດ.

**ມາດຕາ 7.** ລາຍຮັບ ແລະ ລາຍຈ່າຍຂອງງົບປະມານແຫ່ງລັດ ຕ້ອງກຳນົດດ້ວຍລະບຽບກົດຫມາຍ. ບໍ່ອະນຸຍາດໃຫ້ອົງການຂອງລັດ ບໍ່ວ່າຂະແຫນງການໃດ, ຂັ້ນໃດ ຫລື ບຸກຄົນໃດວາງລະບຽບການເກັບລາຍຮັບ, ຈະດ້ວຍຮູບການໃດກໍຕາມ ເພື່ອມອບເຂົ້າງົບປະມານຂອງລັດ ຫລື ເພື່ອການໃຊ້ຈ່າຍຂອງຕົນເອງ.

**ມາດຕາ 8.** ສະພາແຫ່ງຊາດຈະບໍ່ຮັບພິຈາລະນາມາດຕະການໃດຫນຶ່ງ ທີ່ຈະເຮັດໃຫ້ລາຍຈ່າຍຂອງງົບປະມານເພີ່ມຂຶ້ນ ຊຶ່ງບໍ່ໄດ້ຄາດຄະເນ, ຄິດໄລ່ ແລະ ບໍ່ໄດ້ຮັບການອະນຸຍາດໄວ້ກ່ອນແລ້ວຢູ່ໃນແຜນງົບປະມານປະຈຳປີ. ຍົກເວັ້ນກໍລະນີສຸກເສີນ, ມີຄວາມຈຳເປັນ ແລະ ຮີບດ່ວນ.

ການສ້າງຕັ້ງ ແລະ ການດັດແປງວຽກງານພາຍໃນກົງຈັກຂອງລັດຈະດຳເນີນໄປໄດ້ ກໍຕໍ່ເມື່ອຫາກໄດ້ກຳນົດໄວ້ແລ້ວຢູ່ໃນແຜນງົບປະມານເຊັ່ນ: ບໍ່ອະນຸຍາດໃຫ້ມີການດັດແປງວຽກງານ, ການຮັບເອົາລັດຖະກອນໃຫມ່, ການເລື່ອນຂັ້ນ ແລະ ການດັດແປງເງິນເດືອນ ຫລື ເງິນນະໂຍບາຍຕ່າງໆ, ຖ້າວ່າການໃຊ້ຈ່າຍເຫລົ່ານັ້ນຈະເຮັດໃຫ້ມີການຈ່າຍເກີນວົງເງິນງົບປະມານປະຈຳປີທີ່ໄດ້ອະນຸມັດແລ້ວ.

**ມາດຕາ 9.** ລັດຖະບານຮັບຜິດຊອບຕໍ່ສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດງົບປະມານແຫ່ງລັດ. ກະຊວງການເງິນເປັນເສນາທິການໃຫ້ແກ່ລັດຖະບານໃນການສ້າງ, ຈັດຕັ້ງປະຕິບັດ ແລະ ສະຫລຸບງົບປະມານລັດປະຈຳປີ ຫລື ງົບປະມານດັດແກ້.

**ມາດຕາ 10.** ສະພາແຫ່ງຊາດພິຈາລະນາ ແລະ ຮັບຮອງເອົາບົດສະຫລຸບການປະຕິບັດງົບປະມານປະຈຳປີ ຊຶ່ງແມ່ນການຮັບຮອງເອົາຜົນຂອງການປະຕິບັດງົບປະມານ, ການຜິດດ່ຽງລະ ຫວ່າງຕົວເລກທີ່ປະຕິບັດໄດ້ໃນຕົວຈິງ ກັບຕົວເລກຄາດໝາຍຂອງແຜນງົບປະມານປະຈຳປີ ຫລື ຂອງແຜນງົບປະມານດັດແກ້.

**ມາດຕາ 11.** ຖ້າຫາກມີຄວາມຈຳເປັນຕ້ອງແບ່ງຂັ້ນຄຸ້ມຄອງງົບປະມານແຫ່ງລັດ ຊຶ່ງແມ່ນການແບ່ງລາຍຮັບ ແລະ ລາຍຈ່າຍໃຫ້ທ້ອງຖິ່ນ ຫລື ອົງການໃດໜຶ່ງຮັບຜິດຊອບນັ້ນລັດຖະບານຈະເປັນຜູ້ສະເໜີໃຫ້ສະພາແຫ່ງຊາດພິຈາລະນາ.

**ມາດຕາ 12.** ອົງການວິຊາການຂອງລັດທີ່ມີລັກສະນະຄຸ້ມຄອງ ຫລື ບໍລິການທົ່ວສັງຄົມ ແລະ ສາທາລະນະປະໂຫຍດ ອາດຈະໄດ້ຮັບອະນຸມັດໃຫ້ມີງົບປະມານສະເພາະຂອງຕົນເອງ. ລາຍຮັບຂອງອົງການວິຊາການດັ່ງກ່າວ ໄດ້ມາຈາກລາຍຮັບທີ່ລະບຽບກົດໝາຍໄດ້ອະນຸມັດໃຫ້ເກັບ ແລະ ລາຍຮັບຊ່ວຍໜູນຈາກງົບປະມານແຫ່ງລັດຖ້າຈຳເປັນ. ລາຍຮັບດັ່ງກ່າວແມ່ນເພື່ອຈ່າຍ ບໍລິຫານປົກກະຕິ, ເມື່ອຮອດທ້າຍປີງົບປະມານ ຖ້າຫາກເຫັນວ່າມີລາຍຮັບເຫລືອຈ່າຍຈະຕ້ອງໄດ້ສົ່ງຄືນໃຫ້ງົບປປະມານແຫ່ງລັດ ເວັ້ນເສັຍແຕ່ໄດ້ຮັບອະນຸມັດໃຫ້ຮັບສາໄວ້.

ສ່ວນລາຍຈ່າຍເພື່ອການລົງທຶນ ແມ່ນນອນຢູ່ໃນແຜນການລົງທຶນຂອງງົບປະມານແຫ່ງລັດ.

ການສ້າງ, ການພິຈາລະນາຮັບຮອງ, ການຈັດຕັ້ງປະຕິບັດ, ການສະຫລຸບ ແລະ ການກວດກາການປະຕິບັດງົບປະມານສະເພາະນີ້ຈະຕ້ອງໄດ້ດຳເນີນຕາມລະບຽບການອັນດຽວກັບງົບປະມານແຫ່ງລັດ.

## ໝວດທີ 2
## ການກຳນົດລາຍຮັບ ແລະ ລາຍຈ່າຍງົບະມານແຫ່ງລັດ

**ມາດຕາ 13.** ລາຍຮັບງົບປະມານແຫ່ງລັດ ປະກອບດ້ວຍລາຍຮັບປົກກະຕິ ແລະ ລາຍຮັບຈາກຊັບສິນຂອງລັດ.

1. ລາຍຮັບປົກກະຕິແມ່ນລາຍຮັບທີ່ໄດ້ຈາກ:

- ພາສີ, ສ່ວຍສາອາກອນ ແລະ ຄ່າທຳນຽມທຸກປະເພດ;
- ຄ່າທຳນຽມການບໍລິການຂອງອົງການບໍລິຫານ-ວິຊາການຂອງລັດ;
- ທຸກການປັບໃໝ ແລະ ການຂາຍຊັບ ຫລື ສິນຄ້າທີ່ຖືກຢຶດ ແລະ ຮິບ;
- ລາຍໄດ້ຈາກການໃຫ້ເຊົ່າທີ່ດິນ, ເຮືອນ ແລະ ຊັບອື່ນໆ ຂອງລັດ;
- ລາຍໄດ້ຈາກການເກັບດອກເບັ້ຍ ແລະ ຄ່າບໍລິການເງິນກູ້, ຈາກການແບ່ງປັນຜົນກຳໄລ ນຳວິສາຫະກິດຂອງລັດ ຫລື ນຳບໍລິສັດລັດໄດ້ຮ່ວມທຶນ;
- ລາຍຮັບຈາກການປະກອບສ່ວນຂອງປະຊາຊົນ, ຈາກການຊ່ວຍເຫລືອຂອງຕ່າງປະເທດໂດຍບໍ່ມີການທົດແທນຄືນ;
- ລາຍຮັບອື່ນໆ.

2. ລາຍຮັບຈາກຊັບສິນຂອງລັດ ແມ່ນລາຍຮັບທີ່ໄດ້ຈາກ:

- ການທົດແທນຕົ້ນທຶນເງິນກູ້ ແລະ ຊັບອື່ນໆ;

- ການຂາຍຊັບ, ທຶນ ແລະ ຮຸ້ນຂອງລັດ.

**ມາດຕາ 14.** ການເກັບ ແລະ ການວາງອັດຕາພາສີ, ສ່ວຍສາອາກອນ ແລະ ຄ່າທໍານຽມຕ່າງໆ ແມ່ນກໍານົດດ້ວຍລະບຽບກົດໝາຍ.

ສໍາລັບຄ່າທໍານຽມການບໍລິການ ຊຶ່ງແມ່ນລາຍຮັບທີ່ໄດ້ຈາກອົງການບໍລິຫານ; ວິຊາການຂອງລັດນັ້ນ ແມ່ນລັດຖະບານເປັນຜູ້ຕົກລົງ ບົນພື້ນຖານການສະເໜີຂອງລັດຖະມົນຕີວ່າການກະຊວງການເງິນ.

ຂໍ້ກໍານົດຕ່າງໆ ທາງດ້ານການບໍລິຫານລັດ, ການເຊັນສັນຍາສາກົດ ກ່ຽວກັບອັດຕາພາສີ ແລະ ສ່ວຍສາອາກອນທີ່ຈະມີຜົນກະທົບໃສ່ລາຍຮັບ ຫລື ເພີ່ມລາຍຈ່າຍຂອງລັດນັ້ນຕ້ອງ ເປັນເອກະພາບກັບກະຊວງການເງິນເສັຍກ່ອນ.

**ມາດຕາ 15.** ການຂາຍຊັບສິນທີ່ເປັນກໍາມະສິດຂອງລັດຕ້ອງດໍາເນີນ ແລະ ປະຕິບັດຕາມລະບຽບກົດໝາຍ, ລາຍໄດ້ທັງໝົດຈາກການຂາຍຊັບສິນດັ່ງກ່າວນັ້ນ ຕ້ອງມອບເຂົ້າງົບປະມານ.

**ມາດຕາ 16.** ການຂາດດຸນງົບປະມານແຫ່ງລັດ ປະຈໍາປີ ຈະຖືກດຸນດ່ຽງດ້ວຍຄັງສະສົມຂອງລັດ , ເງິນເຫລືອ ຈາກງົບປະມານປີກ່ອນ ຫລື ການກູ້ຢືມຈາກພາຍໃນ ແລະ ຕ່າງປະເທດ.

**ມາດຕາ 17.** ລາຍຈ່າຍງົບປະມານແຫ່ງລັດ ປະກອບດ້ວຍລາຍຈ່າຍປົກກະຕິ ແລະ ລາຍຈ່າຍເພື່ອການລົງທຶນ.

1. ລາຍຈ່າຍປົກກະຕິລວມມີ:

- ລາຍຈ່າຍເງິນເດືອນ ແລະ ຈ່າຍບໍລິຫານກົງຈັກຂອງລັດ, ພັກ ແລະ ອົງການຈັດຕັ້ງມະຫາຊົນ;

- ລາຍຈ່າຍຄ່າດອກເບ້ຍ ຫລື ຄ່າບໍລິການເງິນກູ້;

- ລາຍຈ່າຍເພື່ອດັດສົມເສດຖະກິດ ແລະ ວັດທະນະທໍາ-ສັງຄົມ;

- ລາຍຈ່າຍອື່ນໆ.

2. ລາຍຈ່າຍເພື່ອການລົງທຶນລວມມີ:

- ລາຍຈ່າຍກໍ່ສ້າງພື້ນຖານວັດຖຸເຕັກນິກໂດຍກົງ;

- ລາຍຈ່າຍເພື່ອການລົງທຶນ ແລະ ການຮ່ວມທຶນນໍາວິສາຫະກິດ;

- ລາຍຈ່າຍທົດແທນຕົ້ນທຶນເງິນກູ້ຢືມ;

- ລາຍຈ່າຍໃຫ້ກູ້ຢືມ.

**ມາດຕາ 18.** ລາຍຈ່າຍງົບປະມານຕ້ອງໄດ້ຈັດວາງຕາມສາຍຕັ້ງຂອງກະຊວງ, ອົງການທຽບເທົ່າ ແລະ ອົງການທີ່ແມ່ນຫົວໜ່ວຍງົບປະມານ ຕາມສາລະບານລາຍຈ່າຍ. ຢູ່ໃນແຜນລາຍຈ່າຍທີ່ໄດ້ຈັດວາງ

ຕາມກະຊວງ, ອົງການທຽບເທົ່າ ແລະ ອົງການທີ່ແມ່ນຫົວໜ່ວຍງົບປະມານຕ້ອງໄດ້ຈັດວາງອອກເປັນແຕ່ລະແຂວງ ແລະ ກຳແພງນະຄອນ.

ສະພາແຫ່ງຊາດອະນຸມັດດ້ວຍຕົວເລກລວມສຳລັບລາຍຈ່າຍເພື່ອຊຳລະໜີ້ສິນເງິນກູ້, ໜີ້ສິນຂອງລັດ, ເງິນແຮໄວ້ຈ່າຍອື່ນໆ ແລະ ໂດຍບັງເອີນ. ລັດຖະບານເປັນຜູ້ນຳໃຊ້ທຶນດັ່ງກ່າວ.

**ມາດຕາ 19.** ລາຍຈ່າຍງົບປະມານມີລັກສະນະຈຳກັດຂອບເຂດ ແລະລັກສະນະຄາດຄະເນ.

1. ລາຍຈ່າຍງົບປະມານທີ່ມີລັກສະນະຈຳກັດຂອບເຂດ ແມ່ນລາຍຈ່າຍບໍລິຫານປົກກະຕິ ຊຶ່ງບໍ່ສາມາດຈ່າຍ, ອອກຄຳສັ່ງຈ່າຍ ຫລື ເຊັນຂໍ້ຜູກພັນຈ່າຍເກີນຂອບເຂດຈຳນວນເງິນທີ່ໄດ້ອະນຸມັດເວັ້ນເສັຍແຕ່:

ໃນກໍລະນີຈຳເປັນ ພາຍຫລັງທີ່ລັດຖະບານໄດ້ພິຈາລະນາຢັ້ງຢືນວ່າຈະບໍ່ມີການກະທົບໃສ່ການດຸນດ່ຽງງົບປະມານທີ່ໄດ້ກຳນົດໄວ້ຢູ່ໃນແຜນການງົບປະມານປະຈຳປີ, ລັດຖະບານສາມາດອອກດຳລັດ ເພີ່ມລາຍຈ່າຍງົບປະມານ.

ໃນກະລະນີສຸກເສີນ ແລະ ມີຄວາມຈຳເປັນຮີບດ່ວນເພື່ອຜົນປະໂຫຍດຂອງປະເທດຊາດ ລັດຖະບານສາມາດອອກດຳລັດຈ່າຍເພີ່ມງົບປະມານທີ່ສະພາແຫ່ງຊາດຮັບຮອງເອົາແລ້ວ.

ການເພີ່ມລາຍຈ່າຍງົບປະມານດັ່ງກ່າວ ຕ້ອງໄດ້ນຳສະເໜີຕໍ່ສະພາແຫ່ງຊາດເພື່ອພິຈາລະນາຮັບຮອງເອົາ.

2. ລາຍຈ່າຍງົບປະມານທີ່ມີລັກສະນະຄາດຄະເນ ແມ່ນລາຍຈ່າຍເພື່ອຊຳລະໜີ້ສິນເງິນກູ້, ປະຕິບັດພັນທະຕໍ່ສາກົນ, ຮອງຮັບການປະຕິບັດກົດໝາຍ, ຂໍ້ກຳນົດ, ກົດລະບຽບໃໝ່ ຊຶ່ງໃນເວລາສ້າງແຜນງົບປະມານບໍ່ສາມາດຄິດໄລ່ລາຍຈ່າຍນັ້ນໄດ້ຢ່າງແນ່ນອນ ແລະ ຊັດເຈນ, ເພື່ອຊຳລະຄ່າທຳນຽມ ແລະ ຄ່າດຳເນີນຄະດີຢູ່ສານ, ສົ່ງຄືນລາຍຮັບທີ່ມອບເກີນ ຫລື ມອບຜິດ, ຊຳລະການຫລຸດຜ່ອນ ແລະ ການສົ່ງເງິນຄືນອື່ນໆ.

ກ່ຽວກັບລາຍຈ່າຍທີ່ມີລັກສະນະຄາດຄະເນນີ້ ລັດຖະບານສາມາດອອກດຳລັດຈ່າຍເກີນຂອບເຂດເງິນທີ່ໄດ້ອະນຸມັດ ແຕ່ຕ້ອງໄດ້ນຳສະເໜີຕໍ່ສະພາແຫ່ງຊາດ ເພື່ອພິຈາລະນາຮັບຮອງເອົາ.

**ມາດຕາ 20.** ຈຳນວນເງິນເພື່ອລົງທຶນກໍ່ສ້າງພື້ນຖານ, ລົງທຶນ ແລະ ຮ່ວມທຶນນຳວິສາຫະກິດ ແລະເພື່ອຊຳລະໜີ້ສິນຂອງລັດນັ້ນ ປະກອບດ້ວຍວົງເງິນທີ່ໄດ້ອະນຸມັດໄວ້ເປັນຫລາຍປີຕາມມູນຄ່າຕະຫລອດໂຄງການ ຈຳນວນເງິນທີ່ອະນຸຍາດໃຫ້ເຊັນຂໍ້ຜູກພັນ ແລະ ຈຳນວນເງິນທີ່ໄດ້ອະນຸມັດໃຫ້ຈ່າຍເພື່ອຊຳລະໃນແຕ່ລະປີ.

ຈຳນວນເງິນທີ່ໄດ້ອະນຸມັດຕາມມູນຄ່າຕະຫລອດໂຄງການ ແມ່ນຈຳນວນເງິນສູງສຸດທີ່ສາມາດເຊັນຂໍ້ຜູ້ພັນຈ່າຍໄດ້ໂດຍບໍ່ມີກຳນົດເວລາຈົນກວ່າຈະຖືກລົບລ້າງ ແລະ ສາມາດດັດແກ້ຄືນໃຫມ່ໄດ້ຖ້າຫາກມີການປ່ຽນແປງດ້ານເຕັກນິກ ຫລື ດ້ານລາຄາ.

ຈຳນວນເງິນທີ່ອະນຸມັດໃຫ້ຈ່າຍໃນແຕ່ລະປີ ແມ່ນຈຳນວນເງິນສູງສຸດທີ່ສາມາດອອກຄຳສັ່ງຈ່າຍໄດ້.

**ມາດຕາ 21.** ໃນການປະຕິບັດງົບປະມານ ທຶນທີ່ໄດ້ອະນຸມັດໃຫ້ຈ່າຍເພື່ອຈຸດປະສົງໃດໜຶ່ງແຕ່ຫາກ ບໍ່ໄດ້ນຳໃຊ້ນັ້ນ ລັດຖະມົນຕີວ່າການກະຊວງການເງິນ ມີສິດສະເໜີຕໍ່ນາຍົກລັດຖະມົນຕີເພື່ອລຶບລ້າງຄຳອະນຸມັດດັ່ງກ່າວ ພາຍຫລັງທີ່ໄດ້ຮັບການເຫັນດີຈາກລັດຖະມົນຕີທີ່ກ່ຽວຂ້ອງ.

ຖ້າສະພາບການທາງດ້ານລາຍຮັບລາຍຈ່າຍຫາກມີທ່າອ່ຽງບໍ່ໄປຕາມແຜນການທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວ ຊຶ່ງຈະມີຜົນກະທົບເຖິງການດຸນດ່ຽງງົບປະມານຢ່າງຮ້າຍແຮງນັ້ນ ລັດຖະມົນຕີວ່າການກະຊວງການເງິນ ມີສິດສະເໜີໃຫ້ລັດຖະບານພິຈາລະນາລຶບລ້າງບາງຮ່ວງລາຍ ຈ່າຍທີ່ຍັງບໍ່ທັນມີຂໍ້ຜູກພັນ ແລະ ທີ່ເຫັນວ່າບໍ່ທັນຈຳເປັນ.

**ມາດຕາ 22.** ລັດຖະມົນຕີວ່າການກະຊວງການເງິນມີສິດອະນຸຍາດໃຫ້ໂອນລາຍຈ່າຍຈາກຮ່ວງໃດຮ່ວງໜຶ່ງໄປໃສ່ຮ່ວງອື່ນໃນພາກດຽວກັນ ຕາມການສະເໜີຂອງກະຊວງ ຫລື ອົງການກ່ຽວຂ້ອງໄດ້. ການໂອນເງິນດັ່ງກ່າວມີສອງປະເພດຄື: ການໂອນເງິນໃຫ້ພາກສ່ວນໃຫມ່ຄຸ້ມຄອງ ແລະ ນຳໃຊ້ແຕ່ບໍ່ປ່ຽນແປງລັກສະນະຂອງລາຍຈ່າຍ ແລະ ການໂອນເງິນທີ່ມີການປ່ຽນແປງລັກສະນະຂອງລາຍຈ່າຍນັ້ນຕ້ອງຢູ່ໃນຂອບເຂດງົບປະມານຂອງກະຊວງ ຫລື ອົງການເດີມ. ບໍ່ອະນຸຍາດໃຫ້ໂອນເງິນຈາກລາຍຈ່າຍທີ່ມີລັກສະນະຄາດຄະເນໄປໃຫ້ລາຍຈ່າຍທີ່ມີລັກສະນະຈຳກັດຂອບເຂດ.

**ມາດຕາ 23.** ທຶນຂອງງົບປະມານປະຈຳປີໃດແມ່ນໃຫ້ນຳໃຊ້ສະເພາະງົບປະມານປີນັ້ນໂດຍບໍ່ອະນຸຍາດໃຫ້ນຳໃຊ້ເງິນຂອງງົບປະມານປີໜຶ່ງ ໄປຊຳລະລາຍຈ່າຍງົບປະມານປີອື່ນ ຍົກເວັ້ນກໍລະນີທີ່ໄດ້ກ່າວໄວ້ໃນມາດຕາ 20 ເທິງນີ້. ຈຳນວນເງິນທີ່ເຫລືອຈາກງົບປະມານທີ່ໄດ້ແຈ້ງການອະນຸມັດໄປແລ້ວນັ້ນ ມາຮອດວັນສຸດທ້າຍຂອງສົກປີງົບປະມານ ແມ່ນຈະຕົກໄປໃນຕົວ.

# ພາກທີ II
# ການສະຫລຸບຜົນຂອງການປະຕິບັດງົບປະມານສົກປີຜ່ານມາ ການສ້າງ, ການພິຈາລະນາຮັບຮອງເອົາແຜນງົບປະມານປະຈຳປີ.

## ໝວດທີ 1
## ການສະຫລຸບຜົນຂອງການປະຕິບັດງົບປະມານສົກປີຜ່ານມາ

**ມາດຕາ 24.** ລັດຖະບານລາຍງານຜົນສະຫລຸບສະພາບຂອງການປະຕິບັດງົບປະມານຂອງປີຜ່ານມາ ໂດຍຢັ້ງຢືນເຖິງຈຳນວນລາຍຮັບທີ່ໄດ້ຮັບຕົວຈິງ ແລະ ຈຳນວນເງິນທີ່ໄດ້ສັ່ງຈ່າຍພ້ອມທັງລາຍຈ່າຍທີ່ລັດຖະບານໄດ້ອະນຸມັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້ ລວມທັງການຈ່າຍເກີນ.

ການສະຫລຸບຂາດຕົວໃຫ້ສຳເລັດພາຍໃນຂອບເຂດຫົກເດືອນນັບແຕ່ມື້ທີ່ໄດ້ປິດບັນຊີງົບປະມານແຫ່ງລັດຂອງສົກປີຜ່ານມາ.

## ໝວດທີ 2
## ການສ້າງແຜນງົບປະມານແຫ່ງລັດປະຈຳປີ

**ມາດຕາ 25.** ພາຍໃຕ້ການຊີ້ນຳຂອງນາຍົກລັດຖະມົນຕີ ລັດຖະມົນຕີວ່າການກະຊວງການເງິນກະກຽມຮ່າງແຜນເບື້ອງຕົ້ນຂອງງົບປະມານແຫ່ງລັດ ເພື່ອນຳສະເໜີຕໍ່ກອງປະຊຸມ ລັດຖະບານພິຈາລະນາກ່ຽວກັບທິດທາງ ແລະ ຂອບເຂດທົ່ວໄປຂອງງົບປະມານ.

ໃນເດືອນພຶດສະພາຂອງແຕ່ລະປີ ລັດຖະມົນຕີວ່າການກະຊວງການເງິນ ໂດຍປະສານສົມທົບກັບບັນດາລັດຖະມົນຕີວ່າການກະຊວງ ແລະ ຫົວໜ້າອົງການທີ່ກ່ຽວຂ້ອງກະກຽມຮ່າງ ແຜນເບື້ອງຕົ້ນຂອງງົບປະມານແຫ່ງລັດໂດຍກຳນົດຕົວເລກລາຍຮັບ-ລາຍຈ່າຍລວມຍອດ ແລະ ແຫລ່ງທຶນດຸນດ່ຽງງົບປະມານແຫ່ງລັດ ແລະ ນຳສະເໜີຕໍ່ລັດຖະບານເພື່ອພິຈາລະນາ.

ລັດຖະບານພິຈາລະນາຮ່າງແຜນເບື້ອງຕົ້ນຂອງງົບປະມານແຫ່ງລັດ ແລ້ວອອກຄຳສັ່ງແນະນຳ ພ້ອມທັງກຳນົດວົງເງິນຕາມເປົ້າໝາຍລາຍຈ່າຍໃຫຍ່ ຕາມກະຊວງຂະແໜງການ ຫລື ຕາມປະເພດລາຍຈ່າຍເພື່ອເປັນຕົວເລກຊີ້ນຳໃຫ້ບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການທີ່ແມ່ນຫົວໜ່ວຍງົບປະມານກະກຽມຮ່າງແຜນ ງົບປະມານຂອງຕົນ.

ຫລັງຈາກນັ້ນ ລັດຖະມົນຕີວ່າການຊວງການເງິນ ກໍຈະອອກຄຳແນະນຳລະອຽດດ້ານວິຊາການ.

**ມາດຕາ 26.** ບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການທີ່ແມ່ນຫົວໜ່ວຍງົບປະມານມີໜ້າທີ່ສ້າງແຜນລາຍຮັບ ແລະ ລາຍຈ່າຍງົບປະມານຂອງຕົນໂດຍເລີ່ມຈາກຮາກຖານຂຶ້ນມາຕາມຄຳສັ່ງ, ຕົວເລກຊີ້ນຳຂອງລັດຖະບານ ແລະ ຄຳແນະນຳຂອງກະຊວງການເງິນ ແລ້ວສົ່ງໃຫ້ກະຊວງການເງິນ. ຮ່າງແຜນງົບປະມານແຫ່ງລັດ ນັ້ນຕ້ອງໄດ້ຈຳແນກອອກເປັນແຂວງ, ກຳແພງນະຄອນ.

**ມາດຕາ 27.** ໃນເດືອນກໍລະກົດຂອງແຕ່ລະປີ ກະຊວງການເງິນເປັນຜູ້ສັງລວມຮ່າງແຜນງົບປະມານແຫ່ງລັດຈາກບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການທີ່ແມ່ນຫົວໜ່ວຍງົບປະມານ. ພາຍຫລັງທີ່ໄດ້ຄົ້ນຄ້ວາປຶກສາຫາລືກັບກະຊວງ ແລະ ອົງການທີ່ກ່ຽວຂ້ອງ ເພື່ອແນໃສ່ຮັບປະກັນນະໂຍບາຍເສດຖະກິດຂອງລັດ, ລະດັບຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ບັນດາເປົ້າໝາຍການດຸນດ່ຽງເສດຖະກິດມະຫາພາກແລ້ວລັດຖະມົນຕີວ່າການກະຊວງການເງິນດັດສົມຄືນໃໝ່ຮ່າງແຜນການທີ່ໄດ້ຮັບແລ້ວນຳສະເໜີລັດຖະບານເພື່ອພິຈາລະນາ.

**ມາດຕາ 28.** ຮ່າງແຜນງົບປະມານແຫ່ງລັດ ທີ່ລັດຖະບານໄດ້ພິຈາລະນາຜ່ານແລ້ວນັ້ນຕ້ອງໄດ້ນຳສະເຫນີສະພາແຫ່ງຊາດຢ່າງຊ້າສາມສິບວັນ ກ່ອນມື້ເປີດກອງປະຊຸມສະພາແຫ່ງຊາດເພື່ອພິຈາລະນາຮັບຮອງເອົາ.

## ຫມວດທີ 3
## ການຮັບຮອງເອົາແຜນງົບປະມານແຫ່ງລັດປະຈຳປີ

**ມາດຕາ 29.** ໃນເວລາສະເຫນີຮ່າງແຜນງົບປະມານແຫ່ງລັດປະຈຳປີຕໍ່ສະພາແຫ່ງຊາດ ລັດຖະບານຕ້ອງລາຍງານການສະຫລຸບຜົນຂອງການປະຕິບັດງົບປະມານ ແລະ ສະພາບເສດຖະກິດການເງິນຂອງປີຜ່ານມາ.

**ມາດຕາ 30.** ໃນຮ່າງແຜນງົບປະມານແຫ່ງລັດປະຈຳປີນັ້ນ ບັນດາລາຍຮັບ ແລະ ລາຍຈ່າຍຕ້ອງໄດ້ຈັດວາງຕາມສາລະບານງົບປະມານ, ຕາມກະຊວງ ແລະ ອົງການທຽບເທົ່າ ໃນນັ້ນ ໃຫ້ຈຳແນກອອກເປັນແຂວງ, ກຳແພງນະຄອນ ແລະ ຕ້ອງໄດ້ຊີ້ໃຫ້ເຫັນເຖິງແຫລ່ງທຶນເພື່ອດຸນດ່ຽງລາຍຈ່າຍ.

**ມາດຕາ 31.** ໃນເວລາຜ່ານຮ່າງແຜນງົບປະມານແຫ່ງລັດຢູ່ໃນກອງປະຊຸມສະພາແຫ່ງຊາດນັ້ນ ຖ້າຫາກມີຄຳສະເຫນີໃຫ້ເພີ່ມຮ່ວງລາຍຈ່າຍໃດຫນຶ່ງ ຫລື ມີລາຍຈ່າຍໃຫມ່ນັ້ນຕ້ອງມີການພິຈາລະນາເພີ່ມລາຍຮັບ ຫລື ຈັດວາງລາຍຈ່າຍຄືນໃຫມ່.

**ມາດຕາ 32.** ພາຍຫລັງສະພາແຫ່ງຊາດໄດ້ຮັບຮອງເອົາແຜນງົບປະມານແຫ່ງລັດ ປະຈຳປີແລ້ວ ລັດຖະບານຕ້ອງປະກາດໃຊ້ແຜນງົບປະມານແຫ່ງລັດດັ່ງກ່າວ ພາຍໃນກຳນົດສິບຫ້າວັນ.

**ມາດຕາ 33.** ໃນຕົ້ນປີງົບປະມານ, ຖ້າວ່າຮ່າງແຜນງົບປະມານແຫ່ງລັດປະຈຳປີຫາກຍັງບໍ່ທັນໄດ້ຖືກຮັບຮອງເອົາກໍອະນຸຍາດໃຫ້ລັດຖະບານໃຊ້ຈ່າຍບໍລິຫານປົກກະຕິໄດ້ ໃນແຕ່ລະເດືອນເທົ່າກັບຫນຶ່ງສ່ວນສິບສອງຂອງລາຍຈ່າຍດັ່ງກ່າວທີ່ໄດ້ອະນຸມັດໃນປີຜ່ານມາ. ສຳລັບລາຍຈ່າຍເພື່ອການລົງທຶນ ແມ່ນໃຫ້ສືບຕໍ່ຈ່າຍຕາມຂອບເຂດຈຳນວນເງິນທີ່ໄດ້ອະນຸມັດໃຫ້ເຊັນຂໍ້ຜູກພັນ ຫລື ຕາມຈຳນວນເງິນທີ່ໄດ້ອະນຸມັດໃຫ້ຊຳລະທີ່ຍັງເຫລືອ. ສ່ວນລາຍຈ່າຍເພື່ອຊຳລະຫນີ້ສິນກັບຕ່າງປະເທດ ນັ້ນແມ່ນໃຫ້ປະຕິບັດຕາມສັນຍາທີ່ໄດ້ເຊັນກັນ.

**ມາດຕາ 34.** ການສະເຫນີດັດແກ້ງົບປະມານແຫ່ງລັດ ແມ່ນໃຫ້ປະຕິບັດຕາມລະບຽບການຂອງການສະເຫນີຜ່ານຮ່າງແຜນງົບປະມານແຫ່ງລັດປະຈຳປີ.

## ພາກທີ III
## ການຈັດຕັ້ງປະຕິບັດງົບປະມານແຫ່ງລັດ

### ໝວດທີ 1
### ຜູ້ສັ່ງການ ແລະ ນາຍບັນຊີແຫ່ງລັດ

**ມາດຕາ 35.** ພາຍໃຕ້ການຊີ້ນຳຂອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການເງິນ ເປັນຜູ້ຮັບຜິດຊອບຈັດຕັ້ງປະຕິບັດງົບປະມານແຫ່ງລັດ ທັງເປັນຜູ້ສັ່ງມອບລາຍຮັບ ແລະ ສັ່ງຈ່າຍບ້ວງເງິນລວມຂອງງົບປະມານແຫ່ງລັດ ທີ່ລັດຖະບານມອບຫມາຍໃຫ້.

**ມາດຕາ 36.** ການປະຕິບັດລາຍຮັບ ແລະ ລາຍຈ່າຍງົບປະມານ ແມ່ນດຳເນີນພາຍໃຕ້ຄວາມຮັບຜິດຊອບຂອງຜູ້ສັ່ງການ ແລະ ນາຍບັນຊີແຫ່ງລັດ ໂດຍສອດຄ່ອງກັບລະບຽບກົດຫມາຍການບັນຊີແຫ່ງລັດ.

**ມາດຕາ 37.** ຜູ້ມີສິດສັ່ງການກ່ຽວກັບການມອບລາຍຮັບ ແລະ ລາຍຈ່າຍງົບປະມານຂອງຂະແໜງການຕົນ ແມ່ນລັດຖະມົນຕີ, ຫົວຫນ້າອົງການທຽບເທົ່າ ຊຶ່ງສາມາດມອບສິດດັ່ງກ່າວໃຫ້ເຈົ້າແຂວງ, ເຈົ້າຄອງກຳແພງນະຄອນປະຕິບັດແທນຕົນ ສຳລັບພູດງົບປະມານທີ່ປະຕິບັດຢູ່ທ້ອງຖິ່ນ. ເຈົ້າແຂວງ, ເຈົ້າຄອງກຳແພງນະຄອນຈະມອບສິດຕໍ່ໃຫ້ຜູ້ອື່ນສັ່ງການແທນຕົນອີກກໍໄດ້. ລັດຖະມົນຕີ, ຫົວຫນ້າອົງການທຽບເທົ່າອາດຈະມອບສິດໃຫ້ຜູ້ອື່ນສັ່ງການແທນຕົນກໍໄດ້ ສຳລັບງົບປະມານທີ່ປະຕິບັດຢູ່ຂັ້ນກະຊວງ ແລະ ອົງການທຽບເທົ່າ. ຜູ້ສັ່ງການເປັນຜູ້ຮັບຜິດຊອບການໄລ່ລຽງ ແລະ ອອກຄຳສັ່ງມອບລາຍຮັບ, ເຊັນຂໍ້ຜູກພັນຈ່າຍພາຍຫລັງທີ່ໄດ້ຮັບການອະນຸມັດໃຫ້ຈ່າຍ, ຢັ້ງຢືນການໃຊ້ຈ່າຍ ແລະ ອອກຄຳສັ່ງຈ່າຍ.

**ມາດຕາ 38.** ມີແຕ່ນາຍບັນຊີແຫ່ງລັດເທົ່ານັ້ນ ຈຶ່ງມີສິດເກັບເອົາລາຍຮັບເຂົ້າຄັງເງິນ ແລະ ມີສິດຊຳລະເງິນຕົວຈິງບົນພື້ນຖານຄຳສັ່ງມອບລາຍຮັບ ແລະ ຄຳສັ່ງຈ່າຍຂອງຜູ້ສັ່ງການ. ນາຍບັນຊີແຫ່ງລັດຍັງມີໜ້າທີ່ຮັກສາທຶນ ແລະ ວັດຖຸມີຄ່າຂອງລັດ ຫລື ວັດຖຸທີ່ມອບໃຫ້ລັດຮັກສາ, ເຄື່ອນຍ້າຍເງິນ, ປົກປັກຮັກສາເອກະສານຢັ້ງຢືນການຮັບ ແລະ ການຈ່າຍເງິນ ແລະ ຖືບັນຊີໃຫ້ລັດອີກດ້ວຍ.

**ມາດຕາ 39.** ນາຍບັນຊີແຫ່ງລັດຖືກແຕ່ງຕັ້ງໂດຍລັດຖະມົນຕີວ່າການກະຊວງການເງິນແລະ ມີຄວາມຮັບຜິດຊອບແຕ່ພຽງຜູ້ດຽວຕໍ່ໜ້າກົດໝາຍໃນການປະຕິບັດໜ້າທີ່ຂອງຕົນ

### ໝວດທີ 2
### ລາຍຮັບງົບປະມານແຫ່ງລັດ

**ມາດຕາ 40.** ລາຍຮັບທັງຫມົດຂອງງົບປະມານແຫ່ງລັດ ຕ້ອງລວມສູນຢູ່ໃນບັນຊີຂອງຄັງເງິນແຫ່ງຊາດ. ສຳລັບບາງຮ່ວງລາຍຮັບທີ່ເປັນເງິນຈຳນວນຫນ້ອຍ ແລະ ມີລັກສະນະບໍ່ປົກກະຕິນັ້ນລັດຖະມົນຕີວ່າ

ການກະຊວງການເງິນອາດຈະສ້າງຄັງເງິນຍ່ອຍປະຈໍາຢູ່ສໍານັກງານອົງການທີ່ກ່ຽວຂ້ອງເພື່ອເກັບເອົາລາຍຮັບດັ່ງກ່າວ. ຄັງເງິນຍ່ອຍນີ້ແມ່ນຢູ່ພາຍໃຕ້ການຄຸ້ມຄອງ ແລະ ຄວາມຮັບຜິດຊອບຂອງນາຍບັນຊີແຫ່ງລັດ.

**ມາດຕາ 41.** ການມອບເງິນເຂົ້າງົບປະມານ ອາດຈະຊໍາລະດ້ວຍເງິນສົດ, ໃບແຊັກ, ດ້ວຍການໂອນບັນຊີ ຫລື ດ້ວຍຮູບການອື່ນຕາມທີ່ລະບຽບກົດໝາຍໄດ້ກໍານົດໄວ້.

**ມາດຕາ 42.** ພາຍຫລັງທີ່ນາຍບັນຊີແຫ່ງລັດ ໄດ້ເລັ່ງທວງເອົາລາຍຮັບຕາມໃບສັ່ງມອບເງິນ ແຕ່ກໍບໍ່ໄດ້ຕາມກໍານົດເວລາທີ່ໄດ້ບົ່ງໄວ້ໃນລະບຽບກົດໝາຍຂອງແຕ່ລະປະເພດລາຍຮັບແລ້ວນາຍບັນຊີແຫ່ງລັດມີສິດຮ້ອງຟ້ອງຕໍ່ສານ.

**ມາດຕາ 43.** ໃນແຕ່ລະປີ ນາຍບັນຊີແຫ່ງລັດຕ້ອງເຮັດບັນຊີຈໍານວນໃບສັ່ງມອບເງິນທີ່ເກັບເງິນບໍ່ໄດ້ນັ້ນ ລາຍງານໃຫ້ລັດຖະມົນຕີວ່າການກະຊວງການເງິນເພື່ອນໍາສະເໜີຕໍ່ລັດຖະບານພິຈາລະນາອອກຄໍາຕົກລົງ ກໍານົດຈໍານວນໃບສັ່ງມອບເງິນທີ່ຈະຕ້ອງສືບຕໍ່ເກັບເອົາລາຍຮັບ, ຈໍານວນທີ່ຈະຖືກປົດອອກຈາກບັນຊີ ແລະ ຈໍານວນທີ່ຈະຖືກຫລຸດຜ່ອນ.

## ໝວດທີ 3
## ລາຍຈ່າຍງົບປະມານແຫ່ງລັດ

**ມາດຕາ 44.** ກ່ອນຈະໃຊ້ຈ່າຍງົບປະມານແຫ່ງລັດ ທຸກອົງການຕ້ອງຮັບປະກັນວ່າງົບປະມານຂອງຕົນມີພຽງພໍ ແລະ ຕ້ອງໄດ້ນໍາໃຊ້ໃຫ້ສອດຄ່ອງກັບລະບຽບກົດໝາຍ.

**ມາດຕາ 45.** ກ່ອນຈະເບີກຈ່າຍໄດ້ ທຸກລາຍຈ່າຍຂອງງົບປະມານແຫ່ງລັດ ຕ້ອງໄດ້ຜ່ານການອະນຸມັດໃຫ້ຈ່າຍ, ໄດ້ມີການໄລ່ລຽງ ແລະ ມີຄໍາສັ່ງຈ່າຍ.

**ມາດຕາ 46.** ການອະນຸມັດໃຫ້ຈ່າຍຕ້ອງຮັບປະກັນວ່າ:
- ງົບປະມານມີພຽງພໍ ເພື່ອຊໍາລະການໃຊ້ຈ່າຍດັ່ງກ່າວ;
- ການຄິດໄລ່ມີຄວາມຊັດເຈນ;
- ການໃຊ້ຈ່າຍນັ້ນ ຖືກຕ້ອງຕາມລະບຽບຂອງແຕ່ລະຮ່ວງລາຍຈ່າຍ;
- ການຈັດກ່າຍແມ່ນຖືກຕ້ອງຕາມສາລະບານງົບປະມານແຫ່ງລັດ.

**ມາດຕາ 47.** ຜູ້ສັ່ງການເປັນຜູ້ໄລ່ລຽງລາຍຈ່າຍ. ການໄລ່ລຽງລາຍຈ່າຍແມ່ນ ການຢັ້ງຢືນຄວາມຖືກຕ້ອງຂອງຈໍານວນເງິນທີ່ຕ້ອງຈ່າຍ. ຈໍານວນເງິນທີ່ຈະຈ່າຍຕ້ອງສອດຄອງກັບຈໍານວນເງິນທີ່ບົ່ງໄວ້ໃນສັນຍາ ຫລື ໃນໃບເກັບເງິນ ພາຍຫລັງທີ່ໄດ້ຮັບສິນຄ້າ ແລະ ການບໍລິການສໍາເລັດທັງໝົດ ຫລື ບາງສ່ວນ.

**ມາດຕາ 48.** ການນຳໃຊ້ເງິນຂອງງົບປະມານແຫ່ງລັດ ກ່ອນຈະເບີກຈ່າຍໄດ້ຕ້ອງມີຄຳສັ່ງຈ່າຍເງິນຂອງຜູ້ສັ່ງການ ແລະ ແມ່ນນາຍບັນຊີແຫ່ງລັດເປັນຜູ້ເບີກຈ່າຍຕົວຈິງຕາມລະບຽບການຂອງການບັນຊີແຫ່ງລັດ. ສຳລັບບາງຮ່ວງລາຍຈ່າຍອາດຈະເບີກຈ່າຍກ່ອນກໍໄດ້ ແຕ່ຕ້ອງສະເໜີໃຫ້ຜູ້ສັ່ງການອອກຄຳສັ່ງຈ່າຍເພື່ອຊຳລະບັນຊີ. ລັດຖະມົນຕີວ່າການກະຊວງການເງິນຈະເປັນຜູ້ກຳນົດບັນຊີລາຍຈ່າຍລະອຽດ.

ສ່ວນລາຍຈ່າຍຍິກຍ່ອຍປະຈຳວັນທີ່ມີຈຳນວນເງິນໜ້ອຍນັ້ນ ລັດຖະມົນຕີວ່າການກະຊວງການເງິນອາດຈະສ້າງຄັງເງິນຍ່ອຍຢູ່ນຳສຳນັກງານອົງການທີ່ກ່ຽວຂ້ອງ ເພື່ອຊຳລະລາຍຈ່າຍດັ່ງກ່າວພາຍໃຕ້ການຄຸ້ມຄອງ ແລະ ຄວາມຮັບຜິດຊອບຂອງນາຍບັນຊີແຫ່ງລັດ ແລະ ຕາມທີ່ໄດ້ກຳນົດໄວ້ລະອຽດຢູ່ໃນກົດລະບຽບວ່າດ້ວຍການບັນຊີແຫ່ງລັດ.

**ມາດຕາ 49.** ໜີ້ສິນທີ່ລັດຕ້ອງຈ່າຍ ຊຶ່ງບໍ່ໄດ້ຖືກທວງໃຫ້ຊຳລະພາຍໃນກຳນົດສາມປີນັບແຕ່ສົກປີງົບປະມານທີ່ລາຍຈ່າຍນັ້ນເກີດຂຶ້ນແມ່ນຈະຖືກຕົກໄປ.

# ພາກທີ IV
# ການກວດກາການປະຕິບັດງົບປະມານແຫ່ງລັດ ແລະ ມາດຕະການຕໍ່ຜູ້ລະເມີດ

## ໝວດທີ 1
## ການກວດກາ

**ມາດຕາ 50.** ການປະຕິບັດລາຍຮັບ ແລະ ລາຍຈ່າຍງົບປະມານແຫ່ງລັດ ດຳເນີນບົນພື້ນຖານການກວດກາຂອງອົງການບໍລິຫານ ແລະ ອົງການນິຕິບັນຍັດ.

**ມາດຕາ 51.** ການກວດກາຂອງອົງການບໍລິຫານ ປະກອບດ້ວຍການກວດກາການປະຕິບັດໜ້າທີ່ຂອງຜູ້ສັ່ງການ ແລະ ນາຍບັນຊີແຫ່ງລັດ, ການກວດກາກ່ອນການອະນຸມັດໃຫ້ຈ່າຍຕາມທີ່ໄດ້ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍສະບັບນີ້, ການກວດກາຂອງອົງການຂັ້ນເທິງຕໍ່ຂັ້ນລຸ່ມ ແລະ ການກວດກາຂອງກະຊວງການເງິນ.

**ມາດຕາ 52.** ສະພາແຫ່ງຊາດ ກວດກາການປະຕິບັດງົບປະມານແຫ່ງລັດ ຕາມພາລະບົດບາດທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ.

## ໝວດທີ 2
## ການກະທຳຜິດ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 53.** ລັດຖະກອນຜູ້ທີ່ຈະຖືວ່າເປັນຜູ້ລະເມີດວິໄນງົບປະມານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ກໍຕໍ່ເມື່ອ:

ໄດ້ສ້າງໜີ້ສິນຍ້ອນລະເມີດຂໍ້ກຳນົດກ່ຽວກັບການກວດຜ່ານລາຍຈ່າຍງົບປະມານແຫ່ງລັດ;

ໄດ້ຈັດລາຍຈ່າຍໃດໜຶ່ງຜິດກັບສາລະບານລາຍຈ່າຍໂດຍເຈດຕະນາເພື່ອຈຸດປະສົງຈ່າຍເກີນເງິນງົບປະມານແຫ່ງລັດທີ່ໄດ້ຮັບອະນຸມັດ;

ໄດ້ສ້າງໜີ້ສິນໂດຍທີ່ຕົນບໍ່ມີສິດ ຫລື ບໍ່ໄດ້ຮັບການມອບສິດ;

ໄດ້ລະເມີດລະບຽບກ່ຽວກັບການລາຍຮັບ ແລະ ລາຍຈ່າຍງົບປະມານແຫ່ງລັດ;

ບໍ່ແຈ້ງຂໍ້ມູນຕົວຈິງທີ່ຕົນມີໜ້າທີ່ສົ່ງໃຫ້ອົງການພາສີ, ສ່ວຍສາອາກອນຕາມລະບຽບການຂອງພາສີອາກອນໂດຍເຈດຕະນາ.

**ມາດຕາ 54.** ບຸກຄົນໃດຫາກໄດ້ມີການລະເມີດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 53 ຂອງກົດໝາຍສະບັບນີ້ ຈະຖືກປະຕິບັດວິໄນຕາມລະບຽບກົດໝາຍ ເວັ້ນເສັຍແຕ່ຜູ້ກ່ຽວຫາກໄດ້ປະຕິບັດຕາມຄຳສັ່ງຂອງຂັ້ນເທິງໂດຍມີຫລັກຖານຢັ້ງຢືນ. ໃນກໍລະນີນີ້ ຄວາມຮັບຜິດຊອບຈະຕົກເປັນຂອງຜູ້ອອກຄຳສັ່ງນັ້ນ.

**ມາດຕາ 55.** ບຸກຄົນ ຫລື ອົງການຈັດຕັ້ງມີສິດສະເໜີຕໍ່ຄະນະກຳມະການວິໄນ ເພື່ອໃຫ້ພິຈາລະນາວິໄນຕໍ່ບຸກຄົນທີ່ໄດ້ລະເມີດວິໄນງົບປະມານແຫ່ງລັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 54 ຂອງກົດໝາຍສະບັບນີ້.

**ມາດຕາ 56.** ນອກຈາກການລະເມີດທາງດ້ານວິໄນງົບປະມານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 53 ຂອງກົດໝາຍສະບັບນີ້ແລ້ວ ຖ້າວ່າການລະເມີດນັ້ນ ຫາກເປັນການກະທຳຜິດທາງອາຍາກໍໃຫ້ດຳເນີນຄະດີອາຍາຕໍ່ຜູ້ລະເມີດນັ້ນ.

# ພາກທີ V
# ບົດບັນຍັດສຸດທ້າຍ

**ມາດຕາ 57.** ກົດຫມາຍສະບັບນີ້ ປ່ຽນແທນກົດຫມາຍວ່າດ້ວຍງົບປະມານແຫ່ງລັດ ແລະ ສິດຂອງງົບປະມານແຫ່ງລັດ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ່ 002/81/ສປສ, ລົງວັນທີ່ 13 ສິງຫາ 1981.

**ມາດຕາ 58.** ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ອອກຂໍ້ກຳນົດລະອຽດ ເພື່ອຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 59.** ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ມື້ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.